**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ** ເລກທີ 1202/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 31.10.2020

ດ່ວນທີ່ສຸດ

# ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

**ເລື່ອງ:** ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະວັນທີ 1 ພະຈິກ ຫາ 31 ທັນວາ 2020.

- ອີງຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- ອີງຕາມການລາຍງານການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ ຂອງຄະນະສະເພາະກິດ.
- ອີງຕາມການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 31 ຕຸລາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້:

**1. ເຫັນດີໃຫ້ສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄືກັນກັບມາດຕະການທີ່ໄດ້ປະຕິບັດໃນເດືອນຕຸລາ 2020 ຜ່ານມາ ຕາມທີ່ໄດ້ລະບຸໃນແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1049/ຫສນຍ, ລົງວັນທີ 30 ກັນຍາ 2020 ຢ່າງເຂັ້ມງວດ, ໃນນັ້ນ ສະເພາະມາດຕະການທີ່ສືບຕໍ່ປິດ ມີດັ່ງນີ້:**

**1) ສືບຕໍ່ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ ສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ ແລະ ການຂົນສົ່ງສິນຄ້າ, ຍົກເວັ້ນບາງດ່ານປະເພນີ ຫຼື ດ່ານທ້ອງຖິ່ນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ລົດຂົນສົ່ງສິນຄ້າ ເຂົ້າ-ອອກ ໄດ້. ສ່ວນດ່ານສາກົນ ສືບຕໍ່ປິດສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ, ຍົກເວັ້ນ ພົນລະເມືອງລາວ ແລະ ຊາວຕ່າງປະເທດ ທີ່ມີຄວາມຈຳເປັນຮີບດ່ວນ ໃນການເດີນທາງເຂົ້າ-ອອກ ສປປ ລາວ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ. ສຳລັບການຂົນສົ່ງສິນຄ້າ ຜ່ານດ່ານສາກົນ ແມ່ນສາມາດເຂົ້າ-ອອກໄດ້ຕາມປົກກະຕິ.**

**2) ສືບຕໍ່ໂຈະການອອກວີຊາທ່ອງທ່ຽວ ແລະ ຢ້ຽມຢາມ ສຳລັບບຸກຄົນ ທີ່ເດີນທາງມາຈາກ ຫຼື ຜ່ານປະເທດ ທີ່ຍັງມີການລະບາດ ຂອງພະຍາດ COVID-19 ຍົກເວັ້ນ ນັກທ່ອງທ່ຽວເປັນກຸ່ມ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ. ສຳລັບ ນັກການທູດ, ພະນັກງານອົງການຈັດຕັ້ງສາກົນ, ຊ່ຽວຊານ, ນັກລົງທຶນ, ນັກທຸລະກິດ, ວິຊາການ ແລະ ແຮງງານຕ່າງປະເທດ ທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ສາມາດເຂົ້າມາປະຕິບັດວຽກງານ ຢູ່ສະຖານທູດບັນດາກິດຈະການ ແລະ ໂຄງການຕ່າງໆ ໄດ້, ແຕ່ຕ້ອງຜ່ານການພິຈາລະນາເຫັນດີຈາກຄະນະ**



Scanned with CamScanner

ສະເພາະກິດ. ສ່ວນຂັ້ນຕອນໃນການປະຕິບັດຕົວຈິງ ແມ່ນໃຫ້ສືບຕໍ່ປະຕິບັດຕາມຄໍາແນະນໍາຂອງຄະນະສະເພາະກິດ ສະບັບເລກທີ 2336/ສພກ, ລົງວັນທີ 31 ກໍລະກົດ 2020 ສໍາລັບຜູ້ທີ່ຈະເດີນທາງ ເຂົ້າ-ອອກ ສປປ ລາວ ໃນໄລຍະດໍາເນີນມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ.

2. ເຫັນດີໃຫ້ເປີດຮ້ານບັນເທີງ ແລະ ຄາຣາໂອເກະ ເພື່ອຫຼຸດຜ່ອນຜົນກະທົບທາງດ້ານການດໍາເນີນທຸລະກິດ ໂດຍໃຫ້ປະຕິບັດເວລາປິດ ຕາມດໍາລັດ ວ່າດ້ວຍການບັນເທີງສະບັບເລກທີ 315/ລບ, ລົງວັນທີ 02 ຕຸລາ 2017 ແລະ ປະຕິບັດມາດຕະການປ້ອງກັນການຕິດເຊື້ອ, ການແຜ່ເຊື້ອ ແລະ ຮັກສາຄວາມສະອາດສະຖານທີ່ ຢ່າງເຂັ້ມງວດ.

3. ເຫັນດີໃຫ້ສືບຕໍ່ປຶກສາຫາລືນະໂຍບາຍຜ່ອນຜັນ ການເດີນທາງເຂົ້າ-ອອກ ປະເທດ ລະຫວ່າງ ສປປ ລາວ ແລະ ສສ. ຫວຽດນາມ, ສປປ ລາວ ແລະ ຍີ່ປຸ່ນ ແລະ ກັບບັນດາປະເທດອາຊຽນທີ່ສະເໜີເຂົ້າມາໃໝ່.

4. ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ທ້ອງຖິ່ນກ່ຽວຂ້ອງເພີ່ມທະວີການຕິດຕາມກວດກາ ການເຂົ້າ-ອອກ ຕາມດ່ານຊາຍແດນ ເພື່ອຮັບປະກັນ ບໍ່ໃຫ້ມີການເຂົ້າ-ອອກແບບຊະຊາຍ ຫຼື ມີການລັກລອບເຂົ້າ-ອອກ ບໍ່ຜ່ານດ່ານຊາຍແດນ ເພື່ອຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການນໍາເຊື້ອພະຍາດເຂົ້າມາແຜ່ລະບາດຢູ່ພາຍໃນປະເທດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນໍາສົ່ງ:</u>

- ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ບັນດາສະມາຊິກລັດຖະບານ, ທ່ານລະ 01 ສະບັບ
- ອົງການຈັດຕັ້ງພັກ, ບ່ອນລະ 01 ສະບັບ
- ສູນກາງແນວລາວສ້າງຊາດ 01 ສະບັບ
- ອົງການຈັດຕັ້ງມະຫາຊົນ ບ່ອນລະ 01 ສະບັບ
- ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ
- ຄະນະ ຫສນຍ, ທ່ານລະ 01 ສະບັບ
- ສໍາເນົາ 01 ສະບັບ



Scanned with CamScanner